ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ສຳນັກງານນາຍົກລັດຖະມົນຕີ** **ເລກທີ 056 /ນຍ**

ນະຄອນຫຼວງວຽງຈັນ, ວັນທີ 26 ກຸມພາ 2009

# ດຳລັດ

## ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກະຊວງການຕ່າງປະເທດ

- ອີງຕາມ ກົດໝາຍ ວ່າດ້ວຍລັດຖະບານ ແຫ່ງ ສ.ປ.ປ. ລາວ (ສະບັບປັບປຸງ) ສະບັບເລກທີ 02/ສພຊ, ລົງວັນທີ 06 ພຶດສະພາ 2003;
- ອີງຕາມ ໃບສະເໜີ ຂອງ ທ່ານລັດຖະມົນຕີວ່າການ ກະຊວງການຕ່າງປະເທດ ສະບັບເລກທີ 3159/ຕປທ.ຈພງ.2, ລົງວັນທີ 30 ເມສາ 2008 ແລະ 12866/ຕປທ.ຈພງ.2, ລົງວັນທີ 25 ທັນວາ 2008;
- ອີງຕາມ ໃບສະເໜີ ຂອງ ທ່ານລັດຖະມົນຕີ ປະຈຳ ສຳນັກງານນາຍົກລັດຖະມົນຕີ, ຫົວໜ້າຄະນະບໍລິຫານງານປົກຄອງ ແລະ ຄຸ້ມຄອງລັດຖະກອນ ສະບັບເລກທີ 02/ຫປຄ, ລົງວັນທີ 06 ມັງກອນ 2008.

**ນາຍົກລັດຖະມົນຕີ ແຫ່ງ ສ.ປ.ປ. ລາວ ອອກດຳລັດ:**

**ໝວດທີ I**

**ບົດບັນຍັດທົ່ວໄປ**

**ມາດຕາ 1. ຈຸດປະສົງ**

ດຳລັດສະບັບນີ້ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ ແລະ ແບບແຜນວິທີເຮັດວຽກ ຂອງ ກະຊວງການຕ່າງປະເທດ, ເພື່ອຈັດຕັ້ງຜັນຂະຫຍາຍແນວທາງນະໂຍບາຍລວມ, ນະໂຍບາຍການຕ່າງປະເທດຂອງພັກ, ແຜນການພັດທະນາເສດຖະກິດ-ສັງຄົມຂອງລັດຖະບານ ແນໃສ່ສ້າງສະພາບແວດລ້ອມສາກົນ ທີ່ເອື້ອອຳນວຍໃຫ້ແກ່ພາລະກິດປົກປັກຮັກສາ ແລະ ພັດທະນາປະເທດຊາດ.

**ມາດຕາ 2. ທີ່ຕັ້ງ ແລະ ພາລະບົດບາດ**

ກະຊວງການຕ່າງປະເທດ ຂຽນຫຍໍ້ວ່າ: "ຕປທ" ແມ່ນອົງການຄຸ້ມຄອງລັດຂັ້ນສູນກາງ ໃນກົງຈັກຂອງລັດຖະບານ, ມີພາລະບົດບາດເປັນເສນາທິການຄົ້ນຄວ້າ ແລະ ນຳສະເໜີແນວທາງນະໂຍບາຍການຕ່າງປະເທດຕໍ່ສູນກາງພັກ ແລະ ລັດຖະບານ; ເປັນໃຈກາງ ໃນການປະສານງານການຈັດຕັ້ງປະຕິບັດແນວທາງນະໂຍບາຍການຕ່າງປະເທດຂອງພັກ, ລັດ ຕາມຫຼັກການ ຜ່ານປະຕູດຽວໃນທົ່ວປະເທດ, ມີຄວາມຮັບຜິດຊອບໃນການເຄື່ອນໄຫວປະຕິບັດໜ້າທີ່ ແລະ ຂອບເຂດສິດໃນການຄຸ້ມຄອງບໍລິຫານລັດຕາມການມອບໝາຍ.

## ໝວດທີ II
## ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3. ໜ້າທີ່**

1. ປະຕິບັດລັດຖະທຳມະນູນ, ກົດໝາຍ, ມະຕິຕົກລົງຂອງສະພາແຫ່ງຊາດ, ມະຕິຕົກລົງ ແລະ ຄຳແນະນຳຂອງຄະນະປະຈຳສະພາແຫ່ງຊາດ, ລັດຖະບັນຍັດ ແລະ ລັດຖະດຳລັດຂອງປະທານປະເທດ, ມະຕິຕົກລົງ ແລະ ດຳລັດຂອງລັດຖະບານ, ດຳລັດ, ຂໍ້ຕົກລົງ, ຄຳສັ່ງ ແລະ ຄຳແນະນຳຂອງນາຍົກລັດຖະມົນຕີ;
2. ຄົ້ນຄວ້ານຳສະເໜີແນວທາງ, ນະໂຍບາຍຂອງພັກ ແລະ ລັດກ່ຽວກັບການພົວພັນ ແລະ ການຮ່ວມມືແບບທະວິພາຄີ ແລະ ພະຫຸພາຄີດ້ານການເມືອງ, ເສດຖະກິດ, ຄວາມໝັ້ນຄົງ, ວິທະຍາສາດເຕັກໂນໂລຊີຂໍ້ມູນຂ່າວສານ ແລະ ວັດທະນະທຳ; ພ້ອມທັງເປັນໃຈກາງໃນການປະສານງານ ແລະ ຈັດຕັ້ງປະຕິບັດ;
3. ຄົ້ນຄວ້າແຜນຍຸດທະສາດ, ແຜນການເຄື່ອນໄຫວວຽກງານການຕ່າງປະເທດ ຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ບົນພື້ນຖານແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດໃນແຕ່ລະໄລຍະເພື່ອສະເໜີລັດຖະບານ;
4. ປະສານສົມທົບກັບຄະນະພົວພັນຕ່າງປະເທດສູນກາງພັກ ໃນການເຄື່ອນໄຫວດ້ານການຕ່າງປະເທດ ທາງສາຍພັກ ແລະ ອົງການຈັດຕັ້ງມະຫາຊົນ;
5. ຄົ້ນຄວ້າ, ສ້າງແຜນຍຸດທະສາດ ແລະ ແຜນການກ່ຽວກັບການກະກຽມ ເຂົ້າຮ່ວມບັນດາອົງການຈັດຕັ້ງເສດຖະກິດ-ການຄ້າສາກົນ, ການເຊື່ອມໂຍງເສດຖະກິດອານຸພາກພື້ນ, ພາກພື້ນ, ສາກົນ ແລະ ເປັນໃຈກາງປະສານງານ ບົນພື້ນຖານການບໍລິການຜ່ານປະຕູດຽວ ໃນຂອບເຂດທົ່ວປະເທດ. ສັງລວມ ແລະ ເກັບກຳຂໍ້ມູນຂ່າວສານດ້ານເສດຖະກິດພາຍໃນ ແລະ ສາກົນ ແລະ ເຜີຍແຜ່ແນວທາງນະໂຍບາຍການເຊື່ອມໂຍງເສດຖະກິດຂອງພັກ ແລະ ລັດ ໃນແຕ່ລະໄລຍະ;
6. ຄົ້ນຄວ້າຍຸດທະສາດ, ນະໂຍບາຍ, ເນື້ອໃນ ແລະ ແຜນການເຄື່ອນໄຫວຮ່ວມມື ພາຍໃຕ້ຂອບວຽກງານອາຊຽນ, ເປັນໃຈກາງການປະສານງານຜ່ານລະບົບປະຕູດຽວ ກັບຂະແໜງການ ແລະ ອົງການຕ່າງໆທີ່ກ່ຽວຂ້ອງທັງພາຍໃນ ແລະ ຕ່າງປະເທດ, ຕິດຕາມ ແລະ ຊຸກຍູ້ຂະແໜງການຕ່າງໆ ທີ່ກ່ຽວຂ້ອງ ໃນການຈັດຕັ້ງຜັນຂະຫຍາຍ ສົນທິສັນຍາ, ສັນຍາ, ຂໍ້ຕົກລົງ ແລະ ເອກະ

ສານຕ່າງໆ ທີ່ ສ.ປ.ປ. ລາວ ມີພັນທະ, ລວມທັງການຜັນຂະຫຍາຍແຜນປະຕິບັດງານ ຂອງ ອາຊຽນ *(ASEAN)*. ພ້ອມກັນນັ້ນ ກໍ່ຄຸ້ມຄອງຢ່າງລວມສູນບັນດາສູນການຮ່ວມມື ແລະ ມູນນິທິຂອງອາຊຽນ ແລະ ສູນການຮ່ວມມືລະຫວ່າງອາຊຽນກັບຄູ່ເຈລະຈາ;

7. ຄົ້ນຄ້ວາ, ສ້າງນິຕິກຳຕ່າງໆ ເພື່ອຄຸ້ມຄອງອົງການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານການຕ່າງປະເທດ ລວມທັງພາລະບົດບາດ ຂອງ ພະແນກການຕ່າງປະເທດຂອງທ້ອງຖິ່ນ;
8. ຖະແຫຼງທັດສະນະ ຂອງ ສ.ປ.ປ. ລາວ ກ່ຽວກັບເຫດການທີ່ ສຳຄັນຢູ່ພາຍໃນ ແລະ ຕ່າງປະເທດ;
9. ກະກຽມ ແລະ ດຳເນີນການເຈລະຈາ, ເຊັນສົນທິສັນຍາ ແລະ ສັນຍາສາກົນຕ່າງໆ, ພ້ອມທັງຕິດຕາມ ແລະ ຊຸກຍູ້ການຈັດຕັ້ງປະຕິບັດ; ຄຸ້ມຄອງລວມສູນເອກະສານຕົ້ນສະບັບຂອງສົນທິສັນຍາ ແລະ ສັນຍາຕ່າງໆ ທີ່ ສ.ປ.ປ. ລາວ ໄດ້ເຊັນກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ;
10. ປະສານສົມທົບກັບພາກສ່ວນຕ່າງໆ ທີ່ກ່ຽວຂ້ອງ ໃນການຄຸ້ມຄອງອົງການສື່ມວນຊົນຕ່າງປະເທດທີ່ເຄື່ອນໄຫວຢູ່ ສ.ປ.ປ. ລາວ ຕາມກົດໝາຍ;
11. ສັງລວມສະພາບການຮອບດ້ານຂອງໂລກ, ຂອງອົງການຈັດຕັ້ງພາກພື້ນ, ຂອງແຕ່ລະປະເທດ, ຂອງບັນດາອົງການຈັດຕັ້ງສາກົນ;
12. ຄົ້ນຄວ້າເພື່ອນຳສະເໜີລັດຖະບານພິຈາລະນາ ແລະ ຕົກລົງກ່ຽວກັບ ການສ້າງສາຍພົວພັນທາງການທູດກັບບັນດາປະເທດ ແລະ ສ້າງສາຍພົວພັນກັບບັນດາອົງການຈັດຕັ້ງສາກົນ ແລະ ພາກພື້ນ, ການສ້າງຕັ້ງສຳນັກງານຕາງໜ້າການທູດຂອງ ສ.ປ.ປ. ລາວ ຢູ່ຕ່າງປະເທດ, ການອະນຸມັດໃຫ້ຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ມາຕັ້ງສຳນັກງານຕາງໜ້າການທູດ ຢູ່ ສ.ປ.ປ. ລາວ;
13. ຄົ້ນຄວ້ານຳສະເໜີລັດຖະບານ ເພື່ອແຕ່ງຕັ້ງເອກອັກຄະລັດຖະທູດ, ຫົວໜ້າສຳນັກງານຜູ້ຕາງໜ້າຖາວອນ, ກົງສຸນໃຫຍ່ ແລະ ກົງສຸນກິຕິມະສັກ ແຫ່ງ ສ.ປ.ປ. ລາວ ປະຈຳຕ່າງປະເທດ; ນຳສະເໜີລັດຖະບານພິຈາລະນາຮັບເອົາການແຕ່ງຕັ້ງເອກອັກຄະລັດຖະທູດ, ຫົວໜ້າສຳນັກງານຜູ້ຕາງໜ້າ, ກົງສຸນໃຫຍ່, ກົງສຸນກິຕິມະສັກຂອງຕ່າງປະເທດ ແລະ ຜູ້ຕາງໜ້າອົງການຈັດຕັ້ງສາກົນປະຈຳ ສ.ປ.ປ. ລາວ;
14. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການກະກຽມວຽກງານຕ່າງໆ ໃຫ້ຄະນະຜູ້ແທນລາວທີ່ຈະໄປຢ້ຽມຢາມ ແລະ ເຄື່ອນໄຫວຢູ່ຕ່າງປະເທດ, ພ້ອມນັ້ນ ກໍ່ກະກຽມການຕ້ອນຮັບຄະນະຜູ້ແທນຂອງຕ່າງປະເທດ ທີ່ຈະມາຢ້ຽມຢາມ ແລະ ເຄື່ອນໄຫວຢູ່ ສ.ປ.ປ. ລາວ;
15. ຄຸ້ມຄອງການຈັດຕັ້ງປະຕິບັດລະບຽບການດ້ານພິທີການທູດ, ດ້ານອະພິສິດ ແລະ ການຄຸ້ມກັນທາງການທູດ;
16. ຮັບຜິດຊອບປະສານງານກັບຂະແໜງການ ແລະ ທ້ອງຖິ່ນໃນການຄຸ້ມຄອງຊາຍແດນແຫ່ງຊາດ; ຮ່ວມມືກັບຕ່າງປະເທດກ່ຽວກັບການຈັດຕັ້ງປະຕິບັດສົນທິສັນຍາ, ສັນຍາ ແລະ ຂໍ້ຕົກລົງຕ່າງໆ ລວມທັງການແກ້ໄຂຂໍ້ຂັດແຍ່ງກ່ຽວກັບຊາຍແດນລະຫວ່າງປະເທດ;
17. ຄຸ້ມຄອງລວມສູນໜັງສືຜ່ານແດນການທູດ, ໜັງສືຜ່ານແດນລັດຖະການ, ໜັງສືຜ່ານແດນທຳມະດາ ແລະ ໜັງສືຜ່ານແດນຊົ່ວຄາວ; ຊີ້ນຳ, ກວດກາການອະນຸມັດວີຊາ *(VISA)* ເຂົ້າ-ອອກ ສ.ປ.ປ. ລາວ ແລະ ວີຊາກັບດ່ານ ຢູ່ບັນດາດ່ານສາກົນໃນທົ່ວປະເທດ; ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານກົງສຸນ;

18. ເປັນຈຸດປະສານງານ ແລະ ຕິດຕໍ່ພົວພັນກັບຕ່າງປະເທດໃນການສະເໜີກ່ຽວກັບການຂໍ-ຮັບການຊ່ວຍເຫຼືອທາງການເພື່ອການພັດທະນາ ແລະ ການຊ່ວຍເຫຼືອສຸກເສີນ ບົນພື້ນຖານຫຼັກການຜ່ານປະຕູດຽວ;

19. ເປັນເຈົ້າການປະສານສົມທົບກັບກະຊວງແຜນການ ແລະ ການລົງທຶນ, ກະຊວງການເງິນ, ບັນດາກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ໃນການສ້າງ, ນຳສະເໜີຂໍອະນຸມັດ, ດຳເນີນການເຈລະຈາ ແລະ ເຊັນສັນຍາແມ່ ຫຼື ເອກະສານຍຸດທະສາດ ແລະ ຂອບການຮ່ວມມືກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນຕ່າງໆ ກ່ຽວກັບການຊ່ວຍເຫຼືອທາງການເພື່ອການພັດທະນາ ຊຶ່ງເນື້ອໃນມີລັກສະນະກວມລວມ, ພົວພັນເຖິງນະໂຍບາຍດ້ານການເມືອງ, ເສດຖະກິດ ແລະ ສັງຄົມ;

20. ຄຸ້ມຄອງ, ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງລາວ ແລະ ນິຕິບຸກຄົນຂອງລາວ ຢູ່ຕ່າງປະເທດ ແລະ ຂອງຊາວຕ່າງປະເທດໃນ ສ.ປ.ປ. ລາວ;

21. ໂຄສະນາເຜີຍແຜ່ແນວທາງນະໂຍບາຍຂອງພັກ ແລະ ລັດ, ພ້ອມທັງລະດົມໃຫ້ຄົນລາວ ແລະ ຄົນເຊື້ອຊາດລາວຢູ່ຕ່າງປະເທດ ຫັນມາປະກອບສ່ວນສ້າງສາພັດທະນາປະເທດຊາດ;

22. ຊີ້ນຳ, ຄຸ້ມຄອງ ແລະ ກວດກາໂດຍກົງ ທຸກການເຄື່ອນໄຫວຂອງກົງຈັກຊ່ວຍວຽກ ຢູ່ກະຊວງການຕ່າງປະເທດ, ຂອງສະຖານທູດ, ສຳນັກງານຜູ້ຕາງໜ້າ ແລະ ສະຖານກົງສຸນ ແຫ່ງ ສ.ປ.ປ. ລາວ ຢູ່ຕ່າງປະເທດ;

23. ຊີ້ນຳໂດຍກົງດ້ານວິຊາການໃຫ້ບັນດາພະແນກການຕ່າງປະເທດຂອງທ້ອງຖິ່ນ;

24. ຄຸ້ມຄອງ ແລະ ອຳນວຍຄວາມສະດວກໃຫ້ແກ່ການເຄື່ອນໄຫວຂອງສະຖານທູດ, ສຳນັກງານຜູ້ຕາງໜ້າ, ອົງການຈັດຕັ້ງສາກົນ, ສະຖານກົງສຸນໃຫຍ່ ແລະ ກົງສຸນກິຕິມະສັກ ທີ່ ປະຈຳຢູ່ ສ.ປ.ປ. ລາວ. ກວດກາ, ຂຶ້ນທະບຽນ ແລະ ຕິດຕາມການປະຕິບັດວຽກງານຂອງອົງການຈັດຕັ້ງສາກົນ ທີ່ບໍ່ສັງກັດລັດຖະບານ;

25. ຄຸ້ມຄອງ ແລະ ປະຕິບັດນະໂຍບາຍ ຕໍ່ ພະນັກງານ-ລັດຖະກອນ ໃນຂອບເຂດຄວາມຮັບຜິດຊອບຂອງກະຊວງການຕ່າງປະເທດ;

26. ດຳເນີນການຄົ້ນຄວ້າວິທະຍາສາດການພົວພັນຕ່າງປະເທດ, ຈັດຕັ້ງການບຳລຸງ-ຍົກລະດັບດ້ານວິຊາການຕ່າງປະເທດ, ພາສາຕ່າງປະເທດ ແລະ ອື່ນໆ ໃຫ້ພະນັກງານຂອງກະຊວງ, ອົງການຢູ່ສູນກາງ ແລະ ທ້ອງຖິ່ນ;

27. ສ້າງແຜນການ ແລະ ຄຸ້ມຄອງງົບປະມານການເຄື່ອນໄຫວວຽກງານ ຂອງ ກະຊວງການຕ່າງປະເທດ; ປົກປັກຮັກສາຊັບສົມບັດຂອງກະຊວງ ແລະ ສຳນັກງານຕາງໜ້າການທູດລາວ ທີ່ຕ່າງປະເທດ;

28. ສະຫຼຸບ, ສັງລວມ ຕີລາຄາການເຄື່ອນໄຫວວຽກງານຕ່າງປະເທດ ຂອງ ສ.ປ.ປ. ລາວ ລາຍງານຂັ້ນເທິງເປັນປົກກະຕິ;

29. ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍຂອງລັດຖະບານ.

ມາດຕາ 4. **ຂອບເຂດສິດ**

1. ດຳເນີນການພົບປະເຈລະຈາ, ເຊັນສົນທິສັນຍາ ແລະ ສັນຍາ ກັບປະເທດຕ່າງໆ, ອົງການຈັດຕັ້ງສາກົນ ແລະ ພາກພື້ນໃນນາມ ສ.ປ.ປ. ລາວ; ສະເໜີນາຍົກລັດຖະມົນຕີ ອອກໃບມອບສິດຂອງລັດຖະບານ ໃຫ້ແກ່ຄະນະຜູ້ແທນລາວ ເພື່ອເຂົ້າຮ່ວມກອງປະຊຸມສາກົນ ແລະ ເຊັນສົນທິສັນຍາ, ສັນຍາສາກົນ;
2. ລັດຖະມົນຕີວ່າການກະຊວງການຕ່າງປະເທດ ອອກໃບມອບສິດໃນນາມລັດຖະບານ ໃຫ້ຂັ້ນລັດຖະມົນຕີຊ່ວຍວ່າການ ແລະ ຂັ້ນຖັດລົງມາ ເພື່ອເຂົ້າຮ່ວມກອງປະຊຸມສາກົນ ແລະ ເຊັນສົນທິສັນຍາ, ສັນຍາສາກົນ;
3. ອະນຸມັດໃຫ້ຄະນະຜູ້ແທນລາວ ແຕ່ຂັ້ນກົມເຖິງຂັ້ນວິຊາການ ໄປເຄື່ອນໄຫວວຽກງານຕ່າງປະເທດ; ອະນຸມັດໃຫ້ລັດຖະມົນຕີ, ລັດຖະມົນຕີຊ່ວຍວ່າການໄປເຄື່ອນໄຫວວຽກງານອາຊຽນ;
4. ອະນຸມັດການຈັດກອງປະຊຸມ, ສຳມະນາສາກົນ ແລະ ພາກພື້ນໃນລະດັບວິຊາການຢູ່ ສ.ປ.ປ. ລາວ;
5. ສ້າງ ແລະ ນຳສະເໜີຂໍອະນຸມັດ, ດຳເນີນການເຈລະຈາ ແລະ ເຊັນສັນຍາແມ່, ເອກະສານຍຸດທະສາດ ແລະ ຂອບການຮ່ວມມືໃນແຕ່ລະໄລຍະກັບບັນດາຄູ່ຮ່ວມພັດທະນາ; ພິຈາລະນາ ແລະ ອະນຸມັດແຜນງານ ແລະ ໂຄງການຊ່ວຍເຫຼືອດ້ານການພັດທະນາຈາກອົງການຈັດຕັ້ງສາກົນບໍ່ສັງກັດລັດຖະບານ, ສະມາຄົມ, ມູນນິທິ, ນິຕິບຸກຄົນຂອງຕ່າງປະເທດ;
6. ນຳສະເໜີ, ປະກອບຄຳເຫັນ, ແນະນຳ ແລະ ທວງຖາມບັນດາກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ກ່ຽວກັບບັນຫາທີ່ພົວພັນເຖິງວຽກງານຕ່າງປະເທດ;
7. ປັບປຸງກົງຈັກຊ່ວຍວຽກ , ສັບຊ້ອນ, ແຕ່ງຕັ້ງ, ເລື່ອນຊັ້ນ, ຍ້ອງຍໍ, ປົດຕຳແໜ່ງ, ປະຕິບັດວິໄນ ແລະ ປະຕິບັດນະໂຍບາຍຕ່າງໆ ຕໍ່ພະນັກງານ-ລັດຖະກອນ;
8. ສະເໜີສ້າງຕັ້ງ ຫຼື ຍຸບກົງຈັກຊ່ວຍວຽກຢູ່ພາຍໃນ ແລະ ຕ່າງປະເທດ; ປະກອບຄຳເຫັນເພື່ອສ້າງຕັ້ງ ຫຼື ຍຸບພະແນກການຕ່າງປະເທດຂອງທ້ອງຖິ່ນ;
9. ສະເໜີແຕ່ງຕັ້ງເອກອັກຄະລັດຖະທູດປະຈຳກະຊວງ, ທີ່ປຶກສາຂອງຄະນະນຳກະຊວງ ແລະ ທີ່ປຶກສາດ້ານຕ່າງໆ ຕາມຄວາມຈຳເປັນຂອງວຽກງານ;
10. ພິຈາລະນາກຳນົດຊັ້ນການທູດໃຫ້ພະນັກງານ-ລັດຖະກອນຂອງຂະແໜງການອື່ນ ທີ່ຖືກແຕ່ງຕັ້ງໄປປະຈຳການຢູ່ສຳນັກງານຕາງໜ້າການທູດ ທີ່ຕ່າງປະເທດ.

## ໝວດທີ III
## ໂຄງປະກອບການຈັດຕັ້ງ

ມາດຕາ 5. ໂຄງປະກອບກົງຈັກ

ກົງຈັກຊ່ວຍວຽກກະຊວງການຕ່າງປະເທດ ປະກອບດ້ວຍ 2 ພາກສ່ວນຄື: ພາກສ່ວນທີ່ຢູ່ພາຍໃນປະເທດ ແລະ ພາກສ່ວນທີ່ຢູ່ຕ່າງປະເທດ.

**5.1 ພາກສ່ວນທີ່ຢູ່ພາຍໃນປະເທດ ປະກອບດ້ວຍ:**

1. ຫ້ອງການ;

2. ກົມ ຈັດຕັ້ງ ແລະ ພະນັກງານ;
3. ກົມ ກົງສຸນ;
4. ກົມ ການຂ່າວ;
5. ກົມ ກວດກາ;
6. ກົມ ອາຊຽນ;
7. ກົມ ອາຊີ-ປາຊີຟິກ ແລະ ອາຟຣິກາ;
8. ກົມ ເອີຣົບ ແລະ ອາເມຣິກາ;
9. ກົມ ອົງການຈັດຕັ້ງສາກົນ;
10. ກົມ ເສດຖະກິດ;
11. ກົມ ສົນທິສັນຍາ ແລະ ກົດໝາຍ;
12. ກົມ ພິທີການທູດ;
13. ຫ້ອງການ ຄະນະກຳມະການຊາຍແດນແຫ່ງຊາດ;
14. ກົມ ພົວພັນຄົນເຊື້ອຊາດລາວຢູ່ຕ່າງປະເທດ;
15. ກົມ ການເງິນ;
16. ການຈັດຕັ້ງທີ່ຂຶ້ນກັບກະຊວງ ປະກອບມີ:
    16.1 ສະຖາບັນການຕ່າງປະເທດ;
    16.2 ຫ້ອງການບໍລິການສະຖານທູດ.

5.2 **ພາກສ່ວນທີ່ຢູ່ຕ່າງປະເທດ ປະກອບດ້ວຍ:** ສະຖານເອກອັກຄະລັດຖະທູດ, ສຳນັກງານຜູ້ຕາງໜ້າຖາວອນ ແລະ ສະຖານກົງສຸນໃຫຍ່.

**ມາດຕາ 6. ໂຄງປະກອບບຸກຄະລາກອນ**

**6.1 ການນຳ ຂອງ ກະຊວງການຕ່າງປະເທດ**

1. ຄະນະນຳກະຊວງການຕ່າງປະເທດ ປະກອບດ້ວຍ: ລັດຖະມົນຕີວ່າການ 01 ທ່ານ ໂດຍໄດ້ຮັບການແຕ່ງຕັ້ງຈາກປະທານປະເທດ, ເປັນສະມາຊິກຂອງລັດຖະບານ, ເປັນຫົວໜ້າກະຊວງ ຊຶ່ງມີຄວາມຮັບຜິດຊອບໂດຍກົງ ຕໍ່ ນາຍົກລັດຖະມົນຕີ, ລັດຖະບານ ແລະ ສະພາແຫ່ງຊາດ ໃນການຄຸ້ມຄອງຂະແໜງການທີ່ຕົນຮັບຜິດຊອບ;
2. ລັດຖະມົນຕີຊ່ວຍວ່າການຈຳນວນໜຶ່ງ ໂດຍແມ່ນນາຍົກລັດຖະມົນຕີເປັນຜູ້ແຕ່ງຕັ້ງ, ຊ່ວຍລັດຖະມົນຕີຄຸ້ມຄອງຂະແໜງການຂອງຕົນ, ລົງເລິກຮັບຜິດຊອບໜ່ວຍງານໃດໜຶ່ງຕາມການມອບໝາຍຂອງລັດຖະມົນຕີ.

**6.2 ຄະນະນຳພາດ້ານວິຊາການ**

**6.2.1 ຄະນະນຳພາດ້ານວິຊາການຢູ່ພາຍໃນປະເທດ ປະກອບດ້ວຍ:**

1. ຜູ້ຊ່ວຍລັດຖະມົນຕີວ່າການຈຳນວນໜຶ່ງ ແຕ່ງຕັ້ງໂດຍນາຍົກລັດຖະມົນຕີ ຊຶ່ງມີໜ້າທີ່ຮັບຜິດຊອບວຽກງານໃດໜຶ່ງ ຕາມການມອບໝາຍຂອງລັດຖະມົນຕີ;

2. ຫົວໜ້າຫ້ອງການ, ຫົວໜ້າກົມ, ຫົວໜ້າສະຖາບັນ ແຕ່ງຕັ້ງໂດຍນາຍົກລັດຖະມົນຕີ ແລະ ບັນດາຮອງຫົວໜ້າຫ້ອງການ, ຮອງຫົວໜ້າກົມ, ຮອງຫົວໜ້າສະຖາບັນແຕ່ງຕັ້ງໂດຍລັດຖະມົນຕີວ່າການກະຊວງການຕ່າງປະເທດ ຊຶ່ງມີຄວາມຮັບຜິດຊອບຕໍ່ການນຳກະຊວງໃນການຄຸ້ມຄອງ ແລະ ຈັດຕັ້ງປະຕິບັດວຽກງານຕາມໜ້າທີ່ຂອງຕົນ;
3. ຄະນະພະແນກແຕ່ງຕັ້ງ ໂດຍລັດຖະມົນຕີວ່າການກະຊວງການຕ່າງປະເທດ, ຕາມການສະເໜີຂອງກົມກ່ຽວຂ້ອງ ແລະ ກົມຈັດຕັ້ງ ແລະ ພະນັກງານ. ຄະນະພະແນກມີຄວາມຮັບຜິດຊອບດ້ານວິຊາການໂດຍກົງຕໍ່ຄະນະກົມ.

**6.2.2 ຄະນະນຳພາດ້ານວິຊາການຢູ່ຕ່າງປະເທດ ປະກອບດ້ວຍ:**

1. ເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມ ແຫ່ງ ສ.ປ.ປ. ລາວ ແຕ່ງຕັ້ງໂດຍປະທານປະເທດ, ມີໜ້າທີ່ເຄື່ອນໄຫວຕາງໜ້າ ໃຫ້ ສ.ປ.ປ. ລາວ ໂດຍຢູ່ພາຍໃຕ້ການຊີ້ນຳ-ນຳພາໂດຍກົງ ຂອງ ກະຊວງການຕ່າງປະເທດ ແລະ ມີຄວາມຮັບຜິດຊອບໃນການຊີ້ນຳ-ນຳພາການເຄື່ອນໄຫວວຽກງານ ຂອງ ສຳນັກງານຕາງໜ້າການທູດລາວ ທີ່ຕ່າງປະເທດ;
2. ອຸປະທູດຖາວອນ ແລະ ກົງສຸນໃຫຍ່ ແຕ່ງຕັ້ງໂດຍລັດຖະມົນຕີວ່າການ ກະຊວງການຕ່າງປະເທດ ພາຍຫຼັງໄດ້ຮັບການເຫັນດີຈາກຂັ້ນເທິງ;
3. ທີ່ປຶກສາຝ່າຍເສດຖະກິດ, ການຄ້າ, ສຶກສາ, ຂ່າວສານ ແລະ ວັດທະນະທຳ ແຕ່ງຕັ້ງໂດຍລັດຖະມົນຕີວ່າການ ກະຊວງການຕ່າງປະເທດ;
4. ທີ່ປຶກສາຝ່າຍທະຫານ ແຕ່ງຕັ້ງໂດຍລັດຖະມົນຕີວ່າການ ກະຊວງປ້ອງກັນປະເທດ ແລະ ລັດຖະມົນຕີວ່າການກະຊວງການຕ່າງປະເທດ ເປັນຜູ້ກຳນົດຂັ້ນການທູດ;
5. ບັນດານັກການທູດອື່ນໆ ແຕ່ງຕັ້ງໂດຍລັດຖະມົນຕີວ່າການ ກະຊວງການຕ່າງປະເທດ.

6.3 ພະນັກງານວິຊາການ ແລະ ພະນັກງານຊ່ວຍວຽກບໍລິຫານຈຳນວນໜຶ່ງ ຕາມຄວາມເໝາະສົມ ແລະ ຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ວຽກງານ.

## ໝວດທີ IV
## ລະບອບແບບແຜນວິທີເຮັດວຽກ

### ມາດຕາ 7. ແບບແຜນວິທີເຮັດວຽກ

ກະຊວງການຕ່າງປະເທດເຄື່ອນໄຫວ ແລະ ດຳເນີນງານຕາມຫຼັກການ ດັ່ງນີ້:

1. ຫຼັກການລວມສູນປະຊາທິປະໄຕ, ນຳພາເປັນໝູ່ຄະນະ, ບຸກຄົນຮັບຜິດຊອບ, ປະຕິບັດລະບອບຫົວໜ້າດຽວຕາມລະບົບແບ່ງຂັ້ນຄຸ້ມຄອງ ໂດຍສົມທົບກັບການແບ່ງງານໃນໝູ່ຄະນະ ແລະ ໃນທຸກໆ ຂັ້ນພ້ອມທັງມອບສິດອຳນາດອັນແນ່ນອນ ແລະ ສົມເຫດສົມຜົນໃນການຕັດສິນບັນຫາ ຕາມຂອບເຂດຄວາມຮັບຜິດຊອບຂອງແຕ່ລະຂັ້ນ ແລະ ແຕ່ລະບຸກຄົນ;

2. ຢຶດໝັ້ນ ແລະ ຫັນແນວທາງລວມ, ແນວທາງການຕ່າງປະເທດຂອງພັກ ແລະ ລັດ ໃຫ້ເປັນຍຸດທະສາດ ແລະ ຍຸດໂທບາຍການຕ່າງປະເທດໃນແຕ່ລະໄລຍະ;
3. ເຄື່ອນໄຫວວຽກງານຢ່າງມີແຜນການ, ມີການກວດກາ, ສະຫຼຸບຖອດຖອນບົດຮຽນໃນແຕ່ລະໄລຍະ ແລະ ລາຍງານໃຫ້ຂັ້ນເທິງຢ່າງເປັນປະຈຳ;
4. ໃກ້ຊິດຕິດແທດກັບຮາກຖານທັງຢູ່ພາຍໃນກະຊວງ ແລະ ຕ່າງປະເທດ, ທັງຢູ່ສູນກາງ ແລະ ທ້ອງຖິ່ນ ເພື່ອກວດກາຊຸກຍູ້ແກ້ໄຂວຽກງານຕ່າງໆ ເຮັດໃຫ້ວຽກງານການຕ່າງປະເທດເປັນວຽກງານການທູດມະຫາຊົນ ແລະ ໄດ້ຮັບການປະຕິບັດຕົວຈິງ;
5. ປະສານສົມທົບກັບບັນດາກະຊວງ, ອົງການຢູ່ຂັ້ນສູນກາງ ແລະ ພະແນກການຕ່າງປະເທດຂອງທ້ອງຖິ່ນໃຫ້ແໜ້ນແຟ້ນໃນການຮ່ວມມືກັນປະຕິບັດວຽກງານຕ່າງປະເທດ.

## ໝວດທີ V
## ບົດບັນຍັດສຸດທ້າຍ

**ມາດຕາ 8. ງົບປະມານ ແລະ ຕາປະທັບ**

ກະຊວງການຕ່າງປະເທດມີງົບປະມານ ແລະ ຕາປະທັບຂອງຕົນ ເພື່ອເຄື່ອນໄຫວວຽກງານທາງລັດຖະການ.

**ມາດຕາ 9. ການຜັນຂະຫຍາຍ**

ມອບໃຫ້ລັດຖະມົນຕີວ່າການກະຊວງການຕ່າງປະເທດ ເປັນຜູ້ກຳນົດກ່ຽວກັບພາລະບົດບາດ, ໜ້າທີ່, ຂອບເຂດສິດ ແລະ ໂຄງປະກອບການຈັດຕັ້ງ ຂອງ ຫ້ອງການ, ບັນດາກົມ ແລະ ການຈັດຕັ້ງທີ່ຂຶ້ນກັບກະຊວງການຕ່າງປະເທດ ທີ່ລະບຸຢູ່ໃນມາດຕາ 5 ຂອງດຳລັດສະບັບນີ້.

**ມາດຕາ 10. ການຈັດຕັ້ງປະຕິບັດ**

ໃຫ້ກະຊວງການຕ່າງປະເທດ, ສຳນັກງານນາຍົກລັດຖະມົນຕີ, ບັນດາກະຊວງ, ອົງການທຽບເທົ່າ ຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນທຸກຂັ້ນ ຈົ່ງພ້ອມກັນຈັດຕັ້ງປະຕິບັດດຳລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 11. ຜົນສັກສິດ**

ດຳລັດສະບັບນີ້ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະປ່ຽນແທນດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ກະຊວງການຕ່າງປະເທດ ສະບັບເລກທີ 32/ນຍ, ລົງວັນທີ 17 ມີນາ 2000, ຂໍ້ກຳນົດກົດລະບຽບໃດທີ່ໄດ້ປະກາດໃຊ້ໃນເມື່ອກ່ອນ ຫາກມີເນື້ອໃນຂັດກັບດຳລັດສະບັບນີ້ ລ້ວນແຕ່ຖືກລົບລ້າງ.

**ນາຍົກລັດຖະມົນຕີ ແຫ່ງ ສ.ປ.ປ. ລາວ**

ບົວສອນ ບຸບຜາວັນ